ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

***********000***********

ອົງການໄອຍະການປະຊາຊົນສູງສຸດ ເລກທີ 17 /ອອປສ

ລົງວັນທີ 25 / 11 /2013

# ຄຳແນະນຳ

## ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ

**ເຖິງ: ຫົວໜ້າອົງການໄອຍະການປະຊາຊົນພາກ, ແຂວງ, ນະຄອນ, ເຂດ ແລະ ອົງການໄອຍະການທະຫານ ໃນຂອບເຂດທົ່ວປະເທດ**

**ເລື່ອງ: ການຈັດຕັ້ງປະຕິບັດການສັ່ງຟ້ອງຂຶ້ນສານໂດຍກົງ**

- ອີງຕາມ ມາດຕາ 10, 13 ຂອງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງ ປີ 2009
- ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012

ເພື່ອປະຕິບັດສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນ ໃນການສັ່ງຟ້ອງຜູ້ຖືກຫາຂຶ້ນສານໂດຍກົງ ແນໃສ່ຮັບປະກັນເຮັດໃຫ້ການດຳເນີນຄະດີອາຍາມີຄວາມວ່ອງໄວຊັດເຈນຖືກຕ້ອງຕາມຂັ້ນຕອນກົດໝາຍ.

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຈຶ່ງມີຄຳແນະນຳໃຫ້ຫົວໜ້າອົງການໄອຍະການປະຊາຊົນພາກ, ແຂວງ, ນະຄອນ, ເຂດ ແລະ ອົງການໄອຍະການທະຫານ ໃນຂອບເຂດທົ່ວປະເທດປະຕິບັດ ດັ່ງນີ້:

1. ການຕິດຕາມກວດກາຄະດີທີ່ຈະສັ່ງຟ້ອງຂຶ້ນສານໂດຍກົງ ຕ້ອງກວດກາການປະຕິບັດລະບຽບການທົ່ວໄປກ່ຽວກັບການສືບສວນ-ສອບສວນ ແລະ ວິທີການສືບສວນ-ສອບສວນ ຕາມທີ່ໄດ້ກຳນົດໄວ້ໃນພາກທີ V, ໝວດທີ 3 ແລະ ພາກທີ VI ໝວດທີ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ2012 ແຕ່ບໍ່ຈຳເປັນຕ້ອງມີຄຳສັ່ງເປີດການສືບສວນ-ສອບສວນກໍໄດ້
2. ຕິດຕາມກວດກາເງື່ອນໄຂການສັ່ງຟ້ອງຂຶ້ນສານໂດຍກົງ ຕາມທີ່ກຳນົດໄວ້ໃນມາດຕາ 158 (ໃໝ່) ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ຄື:
   - 2.1 ເປັນການກະທຳຜິດໃນສະຖານລະຫຸໂທດ ຫຼື ໂທສານຸໂທດ ທີ່ກົດໝາຍກຳນົດໂທດຕັດອິດສະລະພາບຕ່ຳກວ່າ 3 ປີ.
   - 2.2 ມີຫຼັກຖານຄົບຖ້ວນເປັນຕົ້ນເປັນການກະທຳຜິດເຊິ່ງໜ້າ, ມີການຮັບສະລະພາບຂອງຜູ້ຖືກຫາ.

3. ການສັ່ງຟ້ອງຂຶ້ນສານໂດຍກົງ ຫົວໜ້າອົງການໄອຍະການ ຈະມີຄໍາຖະແຫລງທີ່ເປັນລາຍລັກອັກສອນ ຫຼື ຈະທໍາການຖະແຫລງທາງປາກເປົ່າຕໍ່ທີ່ປະຊຸມສານກໍໄດ້ ແຕ່ຕ້ອງມີຄໍາສັ່ງຟ້ອງເປັນລາຍລັກອັກສອນ ເນື່ອງຈາກວ່າ ໃນມາດຕາ 165 ວັກ 2 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ສະບັບປັບປຸງ ປີ 2012 ໄດ້ກໍານົດໄວ້ວ່າ ສໍາລັບຄະດີທີ່ສັ່ງຟ້ອງຂຶ້ນສານໂດຍກົງ ຕ້ອງພິຈາລະນາຕັດສິນພາຍໃນກໍານົດ ສີ່ສິບແປດ ຊົ່ວໂມງ ນັບແຕ່ເວລາທີ່ໄດ້ຮັບຄໍາສັ່ງຟ້ອງໂດຍກົງຈາກ ຫົວໜ້າອົງການໄອຍະການ ເປັນຕົ້ນໄປ

3.1. ກ່ອນຫົວໜ້າອົງການໄອຍະການ ຈະລົງລາຍເຊັນໃສ່ໃນປຶ້ມບັນທຶກປະຊຸມສານນັ້ນ ຕ້ອງໄດ້ກວດກາລະອຽດຕໍ່ກັບເນື້ອໃນຄໍາຖະແຫລງໂດຍປາກເປົ່ານັ້ນ ໃຫ້ຖືກຕ້ອງຄົບຖ້ວນຕາມເນື້ອໃນທີ່ຕົນເອງໄດ້ຖະແຫຼງໄປນັ້ນ ເພື່ອຮັບປະກັບຄວາມຖືກຕ້ອງ.

4. ເພື່ອຮັບປະກັນກໍານົດເວລາການດໍາເນີນຄະດີທີ່ຈະສັ່ງຟ້ອງຂຶ້ນສານໂດຍກົງ ຕາມທີ່ໄດ້ກໍານົດໄວ້ມາດຕາ 159 ວັກ 01 ແລະ ວັກ 02 ແລະ ມາດຕາ 165 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ສະບັບປັບປຸງ ປີ 2012 ນັ້ນ ຫົວໜ້າອົງການສືບສວນ-ສອບສວນ ຫຼື ພະນັກງານໄອຍະການປະຊາຊົນ ຕ້ອງສົ່ງສໍານວນຄະດີພ້ອມດ້ວຍຂອງກາງຄະດີ ແລະ ຜູ້ຖືກຫາໃຫ້ອົງການໄອຍະການ ພາຍໃນກໍານົດສີ່ສິບແປດ ຊົ່ວໂມງ, ສໍາລັບເຂດຫ່າງໄກສອກຫຼີກນັ້ນ ແມ່ນພາຍໃນກໍານົດເຈັດວັນ ນັບແຕ່ວັນເກີດເຫດ ຫຼື ວັນແຈ້ງຄວາມເປັນຕົ້ນໄປ.

ຫົວໜ້າອົງການໄອຍະການ ຕ້ອງສັ່ງຟ້ອງຂຶ້ນສານໂດຍກົງພາຍໃນກໍານົດ ສີ່ສິບແປດ ຊົ່ວໂມງ ນັບແຕ່ເວລາໄດ້ຮັບສໍານວນຄະດີເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງໄດ້ແນະນໍາມາຍັງອົງການໄອຍະການປະຊາຊົນພາກ, ແຂວງ, ນະຄອນ, ເຂດ ແລະ ອົງການໄອຍະການທະຫານ ໃນຂອບເຂດທົ່ວປະເທດ ເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຫົວໜ້າອົງການໄອຍະການປະຊາຊົນສູງສຸດ**

**ຄໍາສານ ສຸວົງ**